# ຕາມຫາຊູ້ເກົ່າ

ໂດຍ: ຈຳປາແດງ

ວັນນີ້ພອມນັ່ງເຫຼັ້ມ    ຕາຂະເມັ່ນເຊັນຊາ
ປ່ຽນຊ້າຍມາຕາຂວາ    ປວດຂະມົວຫົວຄິ້ວ
ເໝືອນດັ່ງປາຊິວເຕັ້ນ    ຫາງກະເຊັນລອຍນ້ຳແຈ່ວ
ດິ້ນແດ່ວໆຢາກມິ້ມຖ້ວຍ    ຢ້ານຊວຍມ້ວນມອດຊີວັງ ເດນໍ

ຕາຂະເມັ່ນຕິງບໍ່ຢັ້ງ    ມືຄືນນັ່ງນິນທາຂວັນ ຊັ້ນບໍ
ຫຼືສເນນາງນວນ    ດ່ວນຈິ່ມຫາອ້າຍບໍນ້ອງ
ມີອັນໃດຄາຂ້ອງ    ໝອງໃຈຊັ້ນບໍອຸ່ນ
ຈາກກັນມາແຕ່ກ່ອນພຸ້ນ    ອ້າຍຍັງຄຶ້ນສືບທາວ ນ້ອງແລ້ວ

ຕອນນັ້ນ... ອ້າຍໄດ້ພັດພາກເຈົ້າ    ເພື່ອຮຽນຕໍ່ໃນແດນໄກ
ສັບຊ້ອນໄປຮຽນຮັດເຊັຽ    ຫ່າງຈາກເມັຽໂສກາກັ້ນ
ຈາກສວັນບ່ອນເນົາຢັ້ງ    ທັງເມັຽແພງຫາກໍ່ແຕ່ງ
ຈຳປາແດງ ໄດ້ແຕ່ໄຫ້    ອາລັຍທໍ້ຕໍ່ຊັ້ນກາງ

ຕອນອ້າຍໜີໄກຂ້າງ    ເຮົາໄດ້ຫ່າງພຽງສອງປີ
ໄດ້ຂ່າວຄາວຄືນດີ    ວ່າດ່ວນໜີໄກບ້ານ
ລາສະຖານໄລ້ຈອນ    ເມືອງສອງຄອນບ້ານເກີດ
ໜີຕເລີດເປີດໃຕ້    ນ້ອງລອຍຂ້າມຝັ່ງໄທຍ໌

ຢູ່ຮັດເຊັຽອ້າຍນັ່ງໄຫ້    ທັງເປັນຫ່ວງນຳຄຳແພງ
ຈຳປາແດງທີ່ເຄີຍບານ    ໄດ້ຫງ່ວມເຫງົາເຊົາຊື່ນ
ຢາກກັບຄືນມາບ້ານ    ແຕ່ທາງການພັດຮັດເຄັ່ງ
ຄາສອບເສັງກະພ່ອງນັ້ນ    ໂສກາກັ້ນອ່າວຄະນຶງ ເຈົ້າແລ້ວ

ຮັກກັນມາຢ່າງສຸດຊຶ້ງ    ນາງຄືໜຶ່ງໃນດວງໃຈ
ເຫດຫຼືຜົລແນວໃດ    ນ້ອງຈຶ່ງໄລລາຮ້າງ
ຮຽນຊັ້ນກາງຄະນຶງນ້ອງ    ຈົບສອງປີຈົບຫຼັກສູດ
ຈຸດມຸ້ງໝາຍຕັ້ງໄວ້    ໄປຕາມນ້ອງໃຫ້ທ່ວງທັນ

ຮຽນຈົບມາຮອດບ້ານ　　ການງານບໍ່ຫົວຊາ
ຫາທາງໜີເຂົ້າເມືອງໄທຍ໌　　ເພື່ອໄຕ່ຖາມນຳຄົ້ນ
ສູນອຸບົລຫາຈົນປີ້ນ　　ມາໄດ້ຍິນຄົນເຂົາຊ່າ
ນ້ອງໄປຢູ່ອະເມຣິກາ　　ພ້ອມສາມີໃໝ່ຊ້ອນ　　ສະອອນອ້າຍໄດ້ນັ່ງເຫງົາ

ອ້າຍສືບຖາມຂ່າວເຈົ້າ　　ຜູ້ເນົາຢູ່ແດນໄກ
ຈັກວ່າມີອັນໃດ　　ປ່ຽນໃຈເຫັນເຈົ້າ
ເຂົ້າຢູ່ສູນແທນນ້ອງ　　ສອງສາມເດືອນ ກໍມີຊື່ ໄປແລ້ວ
ສາທຸ... ໃຫ້ເປັນພຽງຂ່າວລື　　ມື້ໃດໄດ້ພົບນ້ອງ　　ເຣື່ອງຄາຂ້ອງຊິຊ່ວງໃຈ

ສາມສິບປີແລ້ວແຕ່ອ້າຍ　　ສືບທາວໄຕ່ຫາຄຳແພງ
ຈຳປາແດງ ຄົນມີກັມ　　ເມື່ອຍແຕ່ຕາມຫາຊູ້
ສາວເອື້ອຍຄຣູຂວັນໃຈອ້າຍ　　ໄປທາງໃດບໍ່ຮູ້ຂ່າວ
ເມື່ອຍແຕ່ສືບເມື່ອຍແຕ່ທາວ　　ສາວໄຍເໜືອຮອດໃຕ້　　ຢ້ານຕາຍມ້ອຍປ່ອຍໃຈ

ເຖິງແມ່ນທາງຝ່າຍອ້າຍ　　ມີເມັຽໃໝ່ຄຽງດອມ ກໍຈິງແລ້ວ
ພ້ອມພ່ຳທັງມີບຸຕ　　ຕັ້ງຄອບຄົວໄປແລ້ວ
ຍັງແປ້ວໃຈແຕ່ນຳນ້ອງ　　ຕອນເຮົາສອງເຮົາໄດ້ຮ່ວມ ກັນແລ້ວ
ທຸກຄືນວັນອ້າຍເຫງົາງ່ວມ　　ຄວາມຈິງຍິງຍອດຊູ້　　ຜັດຊູ້ຊ້ອນຜູ້ອື່ນເຂົາ ຊັ້ນບໍ

ດັ່ງນັ້ນ... ຂໍຝາກກອນກ່າວເວົ້າ　　ນຳລາວເກົ່າ ຄົນໃຈດີ
ມີວິທີແນວໃດ　　ຊ່ວຍ Online ຫານ້ອງ
ຈຳປາທອງຜູ້ໃຈກວ້າງ　　ວັງນ້ຳໃຈ ໃຫ້ອ້າຍຊ່ວຍ
ກັບທັງຊາຍດອນໂຂງ　ຜູ້ສລາດຄິດຄົ້ນ　ເຊໂດນແຕ້ມແຕ່ງຫາ ແມ່ເດີ

ນ້ຳທິພຈາກຝາກຟ້າ　　ລອຍເມຄລົງສເດັດ
ສາວຫຼັກເຈັດຄົນໃຈບຸນ　　ຈິ່ງເກື້ອໜູນໃຈກວ້າງ
ເຫັນຮູບນາງເກືອບຫຼົງທ້ວງ　　ສັງມາຄືຊູ້ເກົ່າ ອ້າຍເດ
ປິ່ນປະສົງ ໃຫ້ຊ່ອຍຈາປາເວົ້າ　　ຂ່າວຄາວກ້ອງສິ່ງກະຈາຍ ແດ່ທ້ອນ

ມັຈຈຸຣາຊ ກໍໃຫ້ໄດ້　　ຖາມໄຖ່ຫານາງແພງ ແມ່ເດີ
ຈຳປາແດງຕາມຫານາງ　　ດັ່ງເສັ້ນທາງ ຖືກຂວາງກັ້ນ

ຟາກຕະວັນ ຕາມຫາຊູ້                    ສີບຸນຊູ ຊູ້ເກົ່າ  ຂ້ອຍແມ່ເດີ
ໂມທະນາໃຫ້ທ່ານປ່າວ    ເອເຊັຽເສຣີປະກາດກ້ອງ  ໃຫ້ແຟນນ້ອງໄດ້ຍິນ   ກະໄຄແມ໋

ຄົ້ນຫາດິນພົກປື້ນ                    ບໍ່ເຫັນກິ່ນງາມຂຳ
ອ້າຍໃຫຽ່ສຸກຂິງຄຳ                    ປະກາດນຳແມ່ເດີອ້າຍ
ບອກວ່າ  ຈຳປາແດງນອນໄຫ້                    ຍັງອາລັຍ ນຳຊູ້ເກົ່າ
ມີອັນໃດ  ໃຫ້ມາຈາປາກເວົ້າ                    ໃຫ້ຫັນຈ້າວຕ່າວມາ... ຈິງແລ້ວ

ສາວໃນໃຈຂ້ອຍຢູ່ຖ້າ                    ດາຣາແຈ່ມເມືອງສວັນ
ຈຸດສຳຄັນເຄີຍຣຽນຄຣູ                    ເປັນຄູ່ຄຽງຣຽງຊ້ອນ
ດວງສມອນອ້າຍຈຳໝັ້ນ                    ຂີ້ແມງວັນເປັນຈຸດເດັ່ນ
ແນມແຕ່ໄກກໍຄຶງເຫັນ   ຮອຍຍິ້ມຄືນຍົກຍ້ອງ        ເຫັນແລ້ວຕ້ອງກ່າວຊົມ

ນາງຄືພົ້ວດອກອົ້ມ                    ເປັນສາວຊ່າເມືອງສອງຄອນ
ສຸດສະອອນນຳສຳນຽງ                    ແອ່ວຜູ່ໄທປີເຫຼີ ກໍ໊
ພໍໄດ້ຍິນສຳນຽງເວົ້າ                    ຢ້ານໃຈເບົາປານວ່າໜຸ່ມ
ຊາຍໄດ້ຟັງຫຣັງກໍເປັນອຸ້ນໆ                    ນຳສຽງແຈ້ວແອ່ວປີເຫຼີ

ໂອ໋ຍນໍ  ຢ້ານແຕ່ອ້າຍໄດ້ນັ່ງເກົ້                    ລະເມີປ່ວງຢູ່ຄືນດຽວ  ອີ່ຕົນເດ
ທຽວເລາະ ຕາມຫານາງ                    ທຸກທິດທາງ ຈົນໃຈຫໍ້
ຂໍຝາກກອນ Online  ໄວ້                    ຂໍຂອບໃຈນຳລາວເກົ່າ
ໃຫ້ຊ່ວຍທາງແຖລງຂ່າວ          ປ່າວປະກາດສິ່ງຮ້ອງ     ກະຈາຍກ້ອງທົ່ວໄປ  ແດ່ທ້ອນ

ຂໍຝາກກອນບັ້ນທ້າຍ                    ນຳສິ່ງໄປຕາມລົມ
ໃຫ້ຣະດົມ ໂຊຍພັດ                    ລັດບອກນາງໃຫ້ຈາແຈ້ງ
ຈຳປາແດງຄືນນີ້                    ຍັງມີນາງກາງໃຈຢູ່
ຍັງເທີດທູນເຊີດຊູ         ຄວາມຮັກຢູ່ຄ້ຳຟ້າ        ບໍ່ເຄີຍລ້າເຊື່ອມສລາຍ  ຈິງແລ້ວ